# COUNTY OF SAN DIEGO
## Independent Redistricting Commission

**COMMISSIONERS**
David Bame, Chair
Amy Caterina, Co-Vice Chair
Rosette Garcia, Co-Vice Chair
Colleen Brown
Chris Chen
Sonia Diaz
Elidia Dostal
Barbara Hansen
Kenneth Inman
Kristina Kruglyak
Arvid Larson
Fernandez Ponds
John Russ
Ramesses Surban

## ການເຮັດປະຊາພິຈານ ກ່ອນການເຮັດແຜນທີ່
## ຂອງຄະນະກຳມະການອິດສະຫຼະກຳນົດເຂດໃໝ່
## ຄາວຕີ້ ຊານດິເອໂກ ລັດຄາລິຟໍເນຍ

**ໂປດຊາບ**ວ່າຄະນະກຳມະການອິດສະຫຼະກຳນົດເຂດໃໝ່ຈະຈັດໃຫ້ມີການເຮັດປະຊາພິຈານ ໃຫ້ສອດຄ່ອງກັບປະມວນກົດໝາຍວ່າດ້ວຍການເລືອກຕັ້ງ ມາດຕາ 21552(c)(2)(A).

| ຕາຕະລາງການເຮັດປະຊາພິຈານ | | | |
|---|---|---|---|
| **ວັນທີ** | **ເວລາ** | **ສະຖານທີ່** | **ທີ່ຢູ່** |
| 8/12/2021 | 5:30 ໂມງແລງ | Mira Mesa Senior Center | 8460 Mira Mesa Blvd, San Diego, CA 92126 |
| 8/18/2021 | 6:00 ໂມງແລງ | Bonita Sunnyside Library | 4375 Bonita Rd, Bonita, CA 91902 |
| 8/26/2021 | 5:30 ໂມງແລງ | Ronald Reagan Community Center | 195 E Douglas Ave, El Cajon, CA 92020 |
| 9/2/2021 | 6:00 ໂມງແລງ | Escondido Chamber of Commerce | 720 N Broadway, Escondido, CA 92025 |
| 9/9/2021 | 5:30 ໂມງແລງ | Valencia Park/Malcolm X Library | 5148 Market St, San Diego, CA 92114 |
| 9/18/2021 | 1:00 ໂມງບ່າຍ | Green Dragon Tavern & Museum | 6115 Paseo Del Norte, Carlsbad, CA 92011 |
| 9/23/2021 | 5:30 ໂມງແລງ | Vista Civic Center | 200 Civic Center Dr., Vista, CA 92084 |
| 9/25/2021 | 1:00 ໂມງບ່າຍ | Spring Valley Community Center | 8735 Jamacha Blvd, Spring Valley, CA 91977 |

ບຸກຄົນຕ່າງໆສາມາດເຂົ້າຮ່ວມການເຮັດປະຊາພິຈານ ກ່ອນການເຮັດແຜນທີ່ ດ້ວຍຕົນເອງ ຫຼືແບບສະເໝືອນຈິງ ແລະຜ່ານຊູມ (Zoom) ໂດຍໃຊ້ໂທລະສັບ. ທ່ານສາມາດຊອກຫາລາຍລະອຽດກ່ຽວກັບການປະຊຸມຜ່ານ Zoom ໃນເວັບໄຊ ການກຳນົດເຂດໃໝ່ຂອງຄາວຕີ້ ຊານດິເອໂກ ໄດ້ທີ່ Pre-Mapping Public Hearings page.

## ລະບຽບວາລະການປະຊຸມ

1. **ການເຮັດປະຊາພິຈານ ກ່ອນການເຮັດແຜນທີ່**

   A. ການນຳສະເໜີເພື່ອໃຫ້ຂໍ້ມູນ

   B. ຮັບຟັງຄຳເຫັນຈາກປະຊາຊົນ

**ຄວາມຊ່ວຍເຫຼືອສຳລັບຜູ້ມີຄວາມພິການ:**
ມີລະບຽບວາລະການປະຊຸມນີ້ແລະບົດບັນທຶກການປະຊຸມໃນຮູບແບບທີ່ເປັນທາງເລືອກໃຫ້ຕາມທີ່ທ່ານຮ້ອງຂໍ. ກະລຸນາຕິດຕໍ່ຫ້ອງການສະໝຽນຂອງຄະນະກຳມະການກຳກັບດູແລທີ່ເບີ (619) 531-5434 ຖ້າທ່ານມີຄຳຖາມ ຫຼືຕ້ອງການຮ້ອງຂໍໃຫ້ມີການອຳນວຍຄວາມສະດວກທີ່ກ່ຽວຂ້ອງກັບຄວາມພິການ. ຂໍແນະນຳໃຫ້ບຸກຄົນທີ່ຕ້ອງການນາຍພາສາແປພາສາມືຕິດຕໍ່ກັບເຈົ້າໜ້າທີ່ປະສານງານຂອງ Countywide ADA Title II ທີ່ເບີ (619) 531-4908. ທ່ານຄວນຍື່ນຄຳຮ້ອງຂໍໃຫ້ມີການອຳນວຍຄວາມສະດວກ ຫຼືຂໍຄວາມຊ່ວຍເຫຼືອໃນຂອບເຂດທີ່ເປັນໄປໄດ້ຢ່າງສົມເຫດສົມຜົນລ່ວງໜ້າຢ່າງໜ້ອຍ 72 ຊົ່ວໂມງກ່ອນການປະຊຸມເພື່ອໃຫ້ສາມາດຈັດການອຳນວຍຄວາມສະດວກໃຫ້ທ່ານໄດ້.

ບໍລິເວນດ້ານໜ້າຂອງຫ້ອງປະຊຸມແມ່ນຈັດໄວ້ສຳລັບບຸກຄົນທີ່ຕ້ອງການນຳໃຊ້ລົດເຂັນຫຼືອຸປະກອນຊ່ວຍເຫຼືອຢ່າງອື່ນເພື່ອໃຫ້ສາມາດເຂົ້າຮ່ວມປະຊຸມໄດ້.

**ຄຳແປລະບຽບວາລະການປະຊຸມແລະການແປພາສາໃນການປະຊຸມ:**
**ມີລະບຽບວາລະການປະຊຸມສະໜອງໃຫ້ເປັນພາສາຕ່າງໆດັ່ງຕໍ່ໄປນີ້: ພາສາອັງກິດ, ພາສາອາຫຼັບ, ພາສາຈີນ, ພາສາຍີ່ປຸ່ນ, ພາສາ** ເກົາຫຼີ, ພາສາລາວ, ພາສາສະເປນ, ພາສາຕາກາລັອກ ແລະພາສາຫວຽດນາມ ທາງອອນລາຍທີ່ www.sdcounty.ca.gov/redistricting. ບຸກຄົນໃດທີ່ຕ້ອງການຄຳແປລະບຽບວາລະການປະຊຸມເປັນພາສາອື່ນເພີ່ມເຕີມ, ຂໍແນະນຳໃຫ້ໂທຫາເບີ (619) 409-3003 ຫຼືສົ່ງອີເມວໄປທີ່ redistricting@sdcounty.ca.gov. ຈະສະໜອງເອກະສານຄຳແປເປັນພາສາອື່ນເພີ່ມເຕີມໃຫ້ຕາມຄຳຮ້ອງຂໍເທົ່ານັ້ນ ແລະຈະສະໜອງໃຫ້ໂດຍໄວທີ່ສຸດເທົ່າທີ່ຈະເຮັດໄດ້ຢ່າງສົມເຫດສົມຜົນ. ບຸກຄົນໃດທີ່ຕ້ອງການໃຫ້ມີການແປພາສາສົດໃນການປະຊຸມ, ຂໍແນະນຳໃຫ້ໂທຫາເບີ (619) 409-3003 ຫຼືສົ່ງອີເມວໄປທີ່ redistricting@sdcounty.ca.gov ຢ່າງໜ້ອຍ 24 ຊົ່ວໂມງກ່ອນການປະຊຸມ

ທາງຄາວຕີ້ San Diego ຍັງສືບຕໍ່ປະຕິບັດຕາມຄຳແນະນຳຂອງພະແນກສາທາລະນະສຸກ ລັດຄາລິຟໍເນຍ (California Department of Public Health) ເຊິ່ງກຳນົດໃຫ້ບຸກຄົນທີ່ຍັງບໍ່ໄດ້ຮັບວັກຊີນໃສ່ໜ້າກາກໃນເວລາທີ່ຢູ່ໃນອາຄານ. ທາງຄາວຕີ້ຍັງປະຕິບັດຕາມຄຳແນະນຳຂອງສູນຄວບຄຸມແລະປ້ອງກັນພະຍາດຕິດຕໍ່ (Centers for Disease Control and Prevention) ເຊິ່ງແນະນຳໃຫ້ທຸກຄົນໃສ່ໜ້າກາກໃນເວລາທີ່ຢູ່ໃນສະຖານທີ່ສາທາລະນະ ເຖິງແມ່ນວ່າຈະໄດ້ຮັບວັກຊີນແລ້ວຫຼືຍັງບໍ່ທັນໄດ້ຮັບກໍ່ຕາມ.